ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານ

ເລກທີ 09/ລບ

ນະຄອນຫຼວງວຽງຈັນ, ວັນທີ 27/01/26

# ດຳລັດ

# ວ່າດ້ວຍ ການປັບໃໝ ແລະ ມາດຕະການອື່ນ ຕໍ່ຜູ້ລະເມີດ ກົດໝາຍ ແລະ ລະບຽບການ ກ່ຽວກັບການຄວບຄຸມຢາສູບ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ສະບັບເລກທີ 03/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ກົດໝາຍວ່າດ້ວຍການຄວບຄຸມຢາສູບ ສະບັບເລກທີ 09/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ໜັງສືສະເໜີຂອງ ກະຊວງສາທາລະນະສຸກ ສະບັບເລກທີ 0009/ສທ, ລົງວັນທີ 08 ມັງກອນ 2026.

## ລັດຖະບານ ອອກດຳລັດ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 (ປັບປຸງ) ຈຸດປະສົງ**

ດຳລັດສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບ ການປັບໃໝ ແລະ ມາດຕະການອື່ນ ຕໍ່ຜູ້ລະເມີດ ກົດໝາຍ ແລະ ລະບຽບການ ກ່ຽວກັບການຄວບຄຸມຢາສູບ ເພື່ອເປັນບ່ອນອີງໃຫ້ແກ່ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ໃນການປັບໃໝ ແລະ ນຳໃຊ້ມາດຕະການອື່ນ ຕໍ່ຜູ້ລະເມີດ ຢ່າງຖືກຕ້ອງ, ເຂັ້ມງວດ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ ແນໃສ່ເຮັດໃຫ້ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີສະຕິເຄົາລົບ, ປະຕິບັດ ກົດໝາຍ ແລະ ລະບຽບການ ກ່ຽວກັບການຄວບຄຸມຢາສູບ, ຮັບປະກັນໃຫ້ພົນລະເມືອງ ຫຼຸດຜ່ອນການຊົມໃຊ້ຢາສູບ ແລະ ມີສຸຂະພາບດີ ປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ພັດທະນາປະເທດຊາດ.

**ມາດຕາ 2 (ປັບປຸງ) ການປັບໃໝ ແລະ ມາດຕະການອື່ນ**

ການປັບໃໝ ແມ່ນ ມາດຕະການທາງດ້ານການເງິນ ທີ່ນຳໃຊ້ຕໍ່ຜູ້ລະເມີດທາງດ້ານບໍລິຫານ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ ກ່ຽວກັບກົດໝາຍ ແລະ ລະບຽບການ ກ່ຽວກັບການຄວບຄຸມຢາສູບ ຕາມອັດຕາຄ່າປັບໃໝ ຕາມທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້.

ມາດຕະການອື່ນ ແມ່ນ ມາດຕະການທີ່ນຳໃຊ້ຕໍ່ຜູ້ລະເມີດ ກົດໝາຍ ແລະ ລະບຽບການ ກ່ຽວກັບການຄວບຄຸມຢາສູບ ເປັນຕົ້ນ ການສຶກສາອົບຮົມ, ກ່າວເຕືອນ, ການ ກັກ, ຍຶດ, ທຳລາຍ ຜະລິດຕະພັນຢາສູບ, ໂຈະການເຄື່ອນໄຫວທຸລະກິດ ຫຼື ຖອນ ໃບອະນຸຍາດດຳເນີນທຸລະກິດ, ໃບອະນຸຍາດ ນຳເຂົ້າ-ສົ່ງອອກ, ຈຳໜ່າຍ ແລະ ຊື້ ຂາຍ.

**ມາດຕາ 3 (ປັບປຸງ) ການອະທິບາຍຄຳສັບ**

ຄຳສັບ ທີ່ໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ຜະລິດຕະພັນຢາສູບ** ໝາຍເຖິງ ຢາເສັ້ນ, ຢາຊອງ, ຢາຊີກາ, ຢາສູບຮູບແບບໃໝ່ ແລະ ຢາສູບຊະນິດອື່ນ ທີ່ນຳໃຊ້ໃບຢາສູບເປັນວັດຖຸດິບທັງໝົດ ຫຼື ສ່ວນໃດສ່ວນໜຶ່ງ ຫຼື ມີສານນິໂກຕິນ ເປັນສ່ວນປະກອບ ຫຼື ສານສະກັດຈາກໃບຢາສູບ;

2. **ຢາສູບຮູບແບບໃໝ່** ໝາຍເຖິງ ຜະລິດຕະພັນຢາສູບ ທີ່ບັນຈຸສານນິໂກຕິນ ເປັນສ່ວນປະກອບ ໂດຍນຳໃຊ້ພະລັງງານໄຟຟ້າ ເປັນຕົ້ນ ຢາສູບໄຟຟ້າ, ຢາສູບຊີຊາ ຫຼື ບາຣາກູ, ຢາສູບໄຟຟ້າແບບລະເຫີຍອາຍ;

3. **ຢາສູບຊີຊາ ຫຼື ບາຣາກູ** ໝາຍເຖິງ ຜະລິດຕະພັນຢາສູບ ທີ່ນຳໃຊ້ພະລັງງານຄວາມຮ້ອນ ເພື່ອສູບ ແລະ ສູດດົມ ເອົາສານລະເຫີຍນິໂກຕິນ ທີ່ປະສົມໃນນ້ຳ ຜ່ານທໍ່ ເຂົ້າປາກ ຫຼື ດັງ;

4. **ຢາສູບໄຟຟ້າແບບລະເຫີຍອາຍ** ໝາຍເຖິງ ຜະລິດຕະພັນຢາສູບ ທີ່ນຳໃຊ້ອຸປະກອນ ໂດຍນຳໃຊ້ລະບົບໄຟຟ້າ ທີ່ກໍ່ໃຫ້ເກີດຄວາມຮ້ອນ ແລະ ລະເຫີຍອາຍ;

5. **ການ ຮັບ, ໃຫ້ ອຸປະຖຳ, ສະໜັບສະໜູນ ຈາກບໍລິສັດຢາສູບ ແລະ ຜູ້ປະກອບການ** ໝາຍເຖິງ ການຮັບ ແລະ ການມອບ ທຸກຮູບແບບ ເປັນຕົ້ນ ເງິນສົດ, ເງິນກູ້, ລາງວັນ, ທຶນສຳລັບການ ຄົ້ນຄວ້າ, ວິໄຈ, ທຶນການສຶກສາ, ທັດສະນະສຶກສາ, ວັດຖຸປະກອນ, ອຸປະກອນການແພດ, ອຸປະກອນຮັບໃຊ້ຫ້ອງການທົ່ວໄປ, ພາຫະນະ, ເຟີນີເຈີ, ເຄື່ອງຕ້ອນ, ຂອງຝາກ, ຂອງຂວັນ, ສິ່ງຈູງໃຈ ແລະ ການຈັດກິດຈະກຳທີ່ສະແດງຄວາມຮັບຜິດຊອບຕໍ່ສັງຄົມ;

6. **ສະຖານທີ່ຫ້າມຂາຍຢາສູບ** ໝາຍເຖິງ ສະຖານທີ່ ທີ່ບໍ່ອະນຸຍາດໃຫ້ ຈຳໜ່າຍ, ຊື້ ຂາຍ ຜະລິດຕະພັນຢາສູບ ເປັນຕົ້ນ ສະຖານທີ່ ບໍລິການສາທາລະນະສຸກ, ການສຶກສາ, ກິລາ, ຫ້ອງການລັດ ແລະ ເອກະຊົນ, ໂຮງມະຫໍລະສົບ, ຫໍວັດທະນະທຳ, ຫໍພິພິທະພັນ, ໂຮງລະຄອນ, ໂຮງກາຍະສິນ, ໂຮງຮູບເງົາ, ພາຍໃນພາຫະນະໂດຍສານສາທາລະນະ, ສາສະນະສະຖານ, ສວນສາທາລະນະ, ສວນສັດ, ສະໜາມເດັກຫຼິ້ນ, ງານບຸນປະເພນີ ແລະ ງານສັງຄົມຕ່າງໆ.

**ມາດຕາ 4 (ໃໝ່) ຫຼັກການກ່ຽວກັບ ການປັບໃໝ ແລະ ມາດຕະການອື່ນ**

ການປັບໃໝ ແລະ ນຳໃຊ້ມາດຕະການອື່ນ ຕໍ່ຜູ້ລະເມີດ ກົດໝາຍ ແລະ ລະບຽບການ ກ່ຽວກັບການຄວບຄຸມຢາສູບ ຕ້ອງປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບ ກົດໝາຍ ແລະ ລະບຽບການ;
2. ຄຸ້ມຄອງ ລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ;
3. ຮັບປະກັນຄວາມເປັນລະບຽບຮຽບຮ້ອຍ, ວ່ອງໄວ, ມີປະສິດທິພາບ ແລະ ປະສິດທິຜົນສູງ;
4. ຮັບປະກັນການປະຕິບັດອັດຕາຄ່າປັບໃໝ ເປັນເອກະພາບ, ຖືກຕ້ອງ, ໂປ່ງໃສ, ຍຸຕິທຳ ແລະ ສາມາດກວດສອບໄດ້;
5. ຮັບປະກັນການປະສານສົມທົບກັບ ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ.

**ມາດຕາ 5 ຂອບເຂດການນຳໃຊ້**

ດຳລັດສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບການຄວບຄຸມຢາສູບ ຢູ່ ສປປ ລາວ.

## ໝວດທີ 2
## ການປັບໃໝ ຕໍ່ຜູ້ລະເມີດ ກົດໝາຍ ແລະ ລະບຽບການ ກ່ຽວກັບການຄວບຄຸມຢາສູບ

**ມາດຕາ 6 (ປັບປຸງ) ການບັນຈຸ ກອກ, ຊອງ ແລະ ຕູດ ຢາສູບ ໂດຍບໍ່ຖືກຕ້ອງຕາມກົດໝາຍ**

ບໍລິສັດຢາສູບ ທີ່ບັນຈຸຢາສູບ ໜ້ອຍກວ່າ ຫຼື ຫຼາຍກວ່າ ຊາວກອກ ຕໍ່ໜຶ່ງຊອງ, ສິບຊອງ ຕໍ່ໜຶ່ງຕູດ, ຫ້າສິບຕູດຕໍ່ ໜຶ່ງຫີບ ຈະຖືກປັບໃໝ ດັ່ງນີ້:

1. 20,000,000 ກີບ ສໍາລັບການລະເມີດ ຄັ້ງທີໜຶ່ງ;
2. 40,000,000 ກີບ ສໍາລັບການລະເມີດ ຄັ້ງທີສອງ;
3. 80,000,000 ກີບ ສໍາລັບການລະເມີດ ຄັ້ງທີສາມ.

**ມາດຕາ 7 (ໃໝ່) ການຂາຍຜະລິດຕະພັນຢາສູບ ເປັນກອກ ແລະ ແບບແຜງລອຍ ຫຼື ແບບເຄື່ອນທີ່**

ບຸກຄົນໃດ ຫາກຂາຍຜະລິດຕະພັນຢາສູບ ເປັນກອກ ແລະ ແບບແຜງລອຍ ຫຼື ແບບເຄື່ອນທີ່ ຈະຖືກປັບໃໝ ດັ່ງນີ້:

1. 200,000 ກີບ ສໍາລັບການລະເມີດ ຄັ້ງທີໜຶ່ງ;
2. 400,000 ກີບ ສໍາລັບການລະເມີດ ຄັ້ງທີສອງ;
3. 800,000 ກີບ ສໍາລັບການລະເມີດ ຄັ້ງທີສາມຂຶ້ນໄປ.

ຜູ້ ຈໍາໜ່າຍ, ຂາຍຍ່ອຍ ຜະລິດຕະພັນຢາສູບ ຫາກຂາຍຜະລິດຕະພັນຢາສູບ ເປັນກອກ ແລະ ແບບແຜງລອຍ ຫຼື ແບບເຄື່ອນທີ່ ຈະຖືກປັບໃໝ ດັ່ງນີ້:

1. 10,000,000 ກີບ ສໍາລັບການລະເມີດ ຄັ້ງທີໜຶ່ງ;
2. 20,000,000 ກີບ ສໍາລັບການລະເມີດ ຄັ້ງທີສອງ;
3. 30,000,000 ກີບ ສໍາລັບການລະເມີດ ຄັ້ງທີສາມ.

**ມາດຕາ 8 (ປັບປຸງ) ການ ຜະລິດ, ນໍາເຂົ້າ ຜະລິດຕະພັນຢາສູບ ໂດຍບໍ່ຖືກຕ້ອງ ຫຼື ບໍ່ໄດ້ຮັບອະນຸຍາດ**

ບໍລິສັດຢາສູບ ແລະ ຜູ້ປະກອບການ ຫາກ ຜະລິດ ຜະລິດຕະພັນຢາສູບ ໂດຍບໍ່ພິມຄໍາເຕືອນສຸຂະພາບ ແລະ ສະຫຼາກ ຫຼື ນໍາເຂົ້າ ຜະລິດຕະພັນຢາສູບ ທີ່ບັນຈຸ ກອກ, ຊອງ ແລະ ຕູດ ຢາສູບ ໜ້ອຍ ຫຼື ຫຼາຍກວ່າ ກົດໝາຍກໍານົດ, ຢາສູບ ນອກລະບົບ, ເຖື່ອນ, ເສຍຄຸນ ຈະຖືກປັບໃໝ ດັ່ງນີ້:

1. 100,000,000 ກີບ ສໍາລັບການລະເມີດ ຄັ້ງທີໜຶ່ງ;
2. 200,000,000 ກີບ ສໍາລັບການລະເມີດ ຄັ້ງທີສອງ;
3. 400,000,000 ກີບ ສໍາລັບການລະເມີດ ຄັ້ງທີສາມ.

ບໍລິສັດຢາສູບ ແລະ ຜູ້ປະກອບການ ຫາກ ຜະລິດ, ນໍາເຂົ້າ ຜະລິດຕະພັນຢາສູບ ທີ່ບໍ່ມີ ສະແຕັມພາສີ, ສະແຕັມອາກອນ, ບໍ່ລະບຸຈໍານວນກອກບັນຈຸ ຈະຖືກປັບໃໝ ດັ່ງນີ້:

1. 10,000,000 ກີບ ສໍາລັບການລະເມີດ ຄັ້ງທີໜຶ່ງ;
2. 20,000,000 ກີບ ສໍາລັບການລະເມີດ ຄັ້ງທີສອງ;
3. 40,000,000 ກີບ ສໍາລັບການລະເມີດ ຄັ້ງທີສາມ.

**ມາດຕາ 9 (ປັບປຸງ) ການ ຈຳໜ່າຍ, ຊື້ ຂາຍ ຜະລິດຕະພັນຢາສູບ ໂດຍບໍ່ຖືກຕ້ອງ**

ຜູ້ ຈຳໜ່າຍ, ຂາຍຍ່ອຍ ຜະລິດຕະພັນຢາສູບ ຫາກ ຈຳໜ່າຍ, ຂາຍ ຜະລິດຕະພັນຢາສູບ ທີ່ບໍ່ມີ ຄຳເຕືອນສຸຂະພາບ ແລະ ສັນຍາລັກ ຈະຖືກປັບໃໝ ດັ່ງນີ້:

1. ສາມເທົ່າ ຂອງມູນຄ່າຜະລິດຕະພັນຢາສູບທັງໝົດທີ່ກວດພົບ ສຳລັບການລະເມີດ ຄັ້ງທີໜຶ່ງ;
2. ຫ້າເທົ່າ ຂອງມູນຄ່າຜະລິດຕະພັນຢາສູບທັງໝົດທີ່ກວດພົບ ສຳລັບການລະເມີດ ຄັ້ງທີສອງ;
3. ສິບເທົ່າ ຂອງມູນຄ່າຜະລິດຕະພັນຢາສູບທັງໝົດທີ່ກວດພົບ ສຳລັບການລະເມີດ ຄັ້ງທີສາມ.

ຜູ້ ຈຳໜ່າຍ, ຂາຍຍ່ອຍ ຜະລິດຕະພັນຢາສູບ ຫາກ ຈຳໜ່າຍ, ຂາຍ ຜະລິດຕະພັນຢາສູບ ນອກລະບົບ, ເຖື່ອນ, ເສຍຄຸນ, ບໍ່ມີສະແຕັມ ພາສີ ແລະ ສະແຕັມອາກອນ ຈະຖືກປັບໃໝ ດັ່ງນີ້:

1. ຫ້າເທົ່າ ຂອງມູນຄ່າຜະລິດຕະພັນຢາສູບທັງໝົດທີ່ກວດພົບ ສຳລັບການລະເມີດ ຄັ້ງທີໜຶ່ງ;
2. ສິບເທົ່າ ຂອງມູນຄ່າຜະລິດຕະພັນຢາສູບທັງໝົດທີ່ກວດພົບ ສຳລັບການລະເມີດ ຄັ້ງທີສອງ;
3. ຊາວເທົ່າ ຂອງມູນຄ່າຜະລິດຕະພັນຢາສູບທັງໝົດທີ່ກວດພົບ ສຳລັບການລະເມີດ ຄັ້ງທີສາມ.

**ມາດຕາ 10 (ໃໝ່) ການບໍ່ລາຍງານຂໍ້ມູນກ່ຽວກັບຜະລິດຕະພັນຢາສູບ**

ບໍລິສັດຢາສູບ ແລະ ຜູ້ປະກອບການ ທີ່ ຜະລິດ, ນຳເຂົ້າ ຜະລິດຕະພັນຢາສູບ ຫາກບໍ່ລາຍງານຢ່າງເປັນລາຍລັກອັກສອນ ກ່ຽວກັບ ສ່ວນປະກອບ, ສ່ວນປະສົມ, ສານທີ່ເກີດຈາກການເຜົາໄໝ້, ລາຍງານລາຍຮັບປະຈຳປີ ໃຫ້ອົງການຄຸ້ມຄອງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຈະຖືກປັບໃໝ ດັ່ງນີ້:

1. 50,000,000 ກີບ ສຳລັບການລະເມີດ ຄັ້ງທີໜຶ່ງ;
2. 100,000,000 ກີບ ສຳລັບການລະເມີດ ຄັ້ງທີສອງ;
3. 200,000,000 ກີບ ສຳລັບການລະເມີດ ຄັ້ງທີສາມ.

**ມາດຕາ 11 (ໃໝ່) ການ ອຸປະຖຳ, ສະໜັບສະໜູນ**

ບໍລິສັດຢາສູບ ແລະ ຜູ້ປະກອບການ ຫາກໃຫ້ການ ອຸປະຖຳ, ສະໜັບສະໜູນ ໂດຍທາງກົງ ແລະ ທາງອ້ອມ ແລະ ຈັດກິດຈະກຳສະແດງຄວາມຮັບຜິດຊອບຕໍ່ສັງຄົມ ທຸກຮູບແບບ ເພື່ອຜົນປະໂຫຍດທາງດ້ານການຄ້າ ຈະຖືກປັບໃໝ ດັ່ງນີ້:

1. 50,000,000 ກີບ ສຳລັບການລະເມີດ ຄັ້ງທີໜຶ່ງ;
2. 100,000,000 ກີບ ສຳລັບການລະເມີດ ຄັ້ງທີສອງ;
3. 200,000,000 ກີບ ສຳລັບການລະເມີດຄັ້ງທີສາມ.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ຮັບເອົາການ ອຸປະຖຳ ແລະ ສະໜັບສະໜູນ ທຸກຮູບແບບ ຈາກບໍລິສັດຢາສູບ, ຜູ້ປະກອບການ ໂດຍທາງກົງ ແລະ ທາງອ້ອມ ຈະຖືກປັບໃໝ ດັ່ງນີ້:

1. 10,000,000 ກີບ ສຳລັບການລະເມີດ ຄັ້ງທີໜຶ່ງ;
2. 15,000,000 ກີບ ສຳລັບການລະເມີດ ຄັ້ງທີສອງ;
3. 20,000,000 ກີບ ສຳລັບການລະເມີດ ຄັ້ງທີສາມ.

ສຳລັບ ບຸກຄົນ ແລະ ການຈັດຕັ້ງ ຫາກລະເມີດເກີນສາມຄັ້ງຂຶ້ນໄປ ຈະຖືກປັບໃໝ ເທົ່າກັບອັດຕາການປັບໃໝໃນຄັ້ງທີສາມ ຕໍ່ຄັ້ງ.

**ມາດຕາ 12 (ໃໝ່) ການບໍ່ມອບພັນທະເຂົ້າກອງທຶນຄວບຄຸມຢາສູບ**

ບໍລິສັດຢາສູບ ແລະ ຜູ້ນຳເຂົ້າ ຫາກບໍ່ມອບພັນທະເຂົ້າກອງທຶນຄວບຄຸມຢາສູບ ຈະຖືກປັບໃໝ ດັ່ງນີ້:

1. ສອງເທົ່າ ຂອງມູນຄ່າທີ່ຕ້ອງມອບເຂົ້າກອງທຶນ ສຳລັບການລະເມີດ ຄັ້ງທີໜຶ່ງ;

2. ສາມເທົ່າ ຂອງມູນຄ່າທີ່ຕ້ອງມອບເຂົ້າກອງທຶນ ສຳລັບການລະເມີດ ຄັ້ງທີສອງ;
3. ຫ້າເທົ່າ ຂອງມູນຄ່າທີ່ຕ້ອງມອບເຂົ້າກອງທຶນ ສຳລັບການລະເມີດ ຄັ້ງທີສາມ.

**ມາດຕາ 13 (ໃໝ່) ການຂາຍຜະລິດຕະພັນຢາສູບ ຜ່ານທາງສື່ເອເລັກໂຕຣນິກ ຫຼື ສື່ສັງຄົມອອນລາຍ**

ບໍລິສັດຢາສູບ ແລະ ຜູ້ປະກອບການ ຫາກຂາຍຜະລິດຕະພັນຢາສູບ ຜ່ານທາງສື່ເອເລັກໂຕຣນິກ ຫຼື ສື່ສັງຄົມອອນລາຍ ຈະຖືກປັບໃໝ ດັ່ງນີ້:

1. 100,000,000 ກີບ ສຳລັບການລະເມີດ ຄັ້ງທີໜຶ່ງ;
2. 200,000,000 ກີບ ສຳລັບການລະເມີດ ຄັ້ງທີສອງ;
3. 300,000,000 ກີບ ສຳລັບການລະເມີດ ຄັ້ງທີສາ.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຫາກຂາຍຜະລິດຕະພັນຢາສູບ ຜ່ານທາງສື່ເອເລັກໂຕຣນິກ ຫຼື ສື່ສັງຄົມອອນລາຍ ຈະຖືກປັບໃໝ ດັ່ງນີ້:

1. 10,000,000 ກີບ ສຳລັບການລະເມີດຄັ້ງທີໜຶ່ງ;
2. 15,000,000 ກີບ ສຳລັບການລະເມີດຄັ້ງທີສອງ;
3. 20,000,000 ກີບ ສຳລັບການລະເມີດຄັ້ງທີສາມ.

ສຳລັບ ບຸກຄົນ ແລະ ການຈັດຕັ້ງ ຫາກລະເມີດເກີນສາມຄັ້ງຂຶ້ນໄປ ຈະຖືກປັບໃໝ ເທົ່າກັບອັດຕາການປັບໃໝໃນຄັ້ງທີສາມ ຕໍ່ຄັ້ງ.

**ມາດຕາ 14 (ປັບປຸງ) ການ ນຳເຂົ້າ ແລະ ໃຊ້ ເຄື່ອງຈັກອັດຕະໂນມັດ ຂາຍຜະລິດຕະພັນຢາສູບ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຫາກ ນຳເຂົ້າ ແລະ ໃຊ້ ເຄື່ອງຈັກອັດຕະໂນມັດ ຂາຍຜະລິດຕະພັນຢາສູບ ຈະຖືກປັບໃໝ ດັ່ງນີ້:

1. 10,000,000 ກີບຕໍ່ເຄື່ອງ ສຳລັບການລະເມີດ ຄັ້ງທີໜຶ່ງ;
2. 20,000,000 ກີບຕໍ່ເຄື່ອງ ສຳລັບການລະເມີດ ຄັ້ງທີສອງ;
3. 30,000,000 ກີບຕໍ່ເຄື່ອງ ສຳລັບການລະເມີດ ທີສາມ.

ສຳລັບ ບຸກຄົນ ແລະ ການຈັດຕັ້ງ ຫາກລະເມີດເກີນສາມຄັ້ງຂຶ້ນໄປ ຈະຖືກປັບໃໝ ເທົ່າກັບອັດຕາການປັບໃໝໃນຄັ້ງທີສາມ ຕໍ່ຄັ້ງ.

ເຈົ້າຂອງສະຖານທີ່ ຫາກອະນຸຍາດໃຫ້ຕິດຕັ້ງເຄື່ອງຈັກອັດຕະໂນມັດ ຂາຍຜະລິດຕະພັນຢາສູບ ຈະຖືກປັບໃໝ 10,000,000 ກີບຕໍ່ເຄື່ອງ.

**ມາດຕາ 15 (ໃໝ່) ການຄອບຄອງ ຫຼື ຊົມໃຊ້ ຜະລິດຕະພັນຢາສູບຮູບແບບໃໝ່**

ບຸກຄົນໃດ ຫາກໄດ້ຄອບຄອງ ຫຼື ຊົມໃຊ້ ຜະລິດຕະພັນຢາສູບຮູບແບບໃໝ່ ດ້ວຍການ ສູບ, ຄ້ຽວ, ອົມ, ດົມ, ດູດ, ກິນ, ສູດ, ຖູນ, ທາ, ຣົມ ຫຼື ພົ່ນເຂົ້າໄປໃນຮ່າງກາຍ ໂດຍຜ່ານປາກ ຫຼື ດັງ ຫຼື ວິທີການອື່ນ ທີ່ພາໃຫ້ເກີດຄວັນ ຫຼື ບໍ່ເກີດຄວັນ ຈະຖືກປັບໃໝ ດັ່ງນີ້:

1. 500,000 ກີບ ສຳລັບການລະເມີດ ຄັ້ງທີໜຶ່ງ;
2. 1,000,000 ກີບ ສຳລັບການລະເມີດ ຄັ້ງທີສອງ;
3. 1,500,000 ກີບ ສຳລັບການລະເມີດ ຄັ້ງທີສາມຂຶ້ນໄປ.

ມາດຕາ 16 (ໃໝ່) ການສ້າງຕັ້ງໂຮງງານ ຫຼື ບໍລິສັດຢາສູບ ໂດຍບໍ່ໄດ້ຮັບອະນຸຍາດ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ສ້າງຕັ້ງໂຮງງານຜະລິດຢາສູບ ຫຼື ບໍລິສັດຢາສູບ ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ ດັ່ງນີ້:

1. 500,000,000 ກີບ ສຳລັບໂຮງງານ ຫຼື ບໍລິສັດຢາສູບ ຂະໜາດນ້ອຍ;
2. 700,000,000 ກີບ ສຳລັບໂຮງງານ ຫຼື ບໍລິສັດຢາສູບ ຂະໜາດກາງ;
3. 1,000,000,000 ກີບ ສຳລັບໂຮງງານ ຫຼື ບໍລິສັດຢາສູບ ຂະໜາດໃຫຍ່.

ມາດຕາ 17 (ປັບປຸງ) ການໂຄສະນາຜະລິດຕະພັນຢາສູບ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຫາກໂຄສະນາຜະລິດຕະພັນຢາສູບໃນທຸກຮູບແບບ ທີ່ເປັນການຊຸກຍູ້, ສົ່ງເສີມ ການສູບຢາ, ການຈຳໜ່າຍ, ການຊື້ ຂາຍ ຜະລິດຕະພັນຢາສູບ ລວມທັງ ການສະແດງ ຂໍ້ຄວາມ ຫຼື ສັນຍາລັກ ເພື່ອປຸກລະດົມໃຫ້ນິຍົມໃຊ້ຜະລິດຕະພັນຢາສູບ ຈະຖືກປັບໃໝ ດັ່ງນີ້:

1. 100,000,000 ກີບ ສຳລັບການລະເມີດ ຄັ້ງທີໜຶ່ງ;
2. 200,000,000 ກີບ ສຳລັບການລະເມີດ ຄັ້ງທີສອງ;
3. 400,000,000 ກີບ ສຳລັບການລະເມີດ ຄັ້ງທີສາມ.

ສຳລັບ ບຸກຄົນ ແລະ ການຈັດຕັ້ງ ຫາກລະເມີດເກີນສາມຄັ້ງຂຶ້ນໄປ ຈະຖືກປັບໃໝ ເທົ່າກັບອັດຕາການປັບໃໝໃນຄັ້ງທີສາມ ຕໍ່ຄັ້ງ.

ມາດຕາ 18 (ໃໝ່) ການ ຈຳໜ່າຍ, ຂາຍ ຜະລິດຕະພັນຢາສູບ ໂດຍມີການ ຫຼຸດ, ແລກ, ແຈກ, ແຖມ ແລະ ເອົາຜະລິດຕະພັນໃຫ້ລ້າ ຫຼື ແລກປ່ຽນຜະລິດຕະພັນຢາສູບກັບສິນຄ້າອື່ນ

ບໍລິສັດຢາສູບ ແລະ ຜູ້ປະກອບການ ຫາກ ຈຳໜ່າຍ, ຂາຍ ຜະລິດຕະພັນຢາສູບ ໂດຍມີການ ຫຼຸດ, ແລກ, ແຈກ, ແຖມ ແລະ ເອົາຜະລິດຕະພັນໃຫ້ລ້າ ຫຼື ແລກປ່ຽນຜະລິດຕະພັນຢາສູບກັບສິນຄ້າອື່ນ ຈະຖືກປັບໃໝ ດັ່ງນີ້:

1. 50,000,000 ກີບ ສຳລັບການລະເມີດ ຄັ້ງທີໜຶ່ງ;
2. 100,000,000 ກີບ ສຳລັບການລະເມີດ ຄັ້ງທີສອງ;
3. 200,000,000 ກີບ ສຳລັບການລະເມີດ ຄັ້ງທີສາມ.

ມາດຕາ 19 (ໃໝ່) ການຈຳໜ່າຍ ແລະ ຂາຍ ຢາສູບ ໂດຍບໍ່ໄດ້ຮັບອະນຸຍາດ

ບໍລິສັດຢາສູບ ຫາກ ຈຳໜ່າຍ ແລະ ຂາຍ ຜະລິດຕະພັນຢາສູບໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ ດັ່ງນີ້:

1. 100,000,000 ກີບ ສຳລັບການລະເມີດ ຄັ້ງທີໜຶ່ງ;
2. 200,000,000 ກີບ ສຳລັບການລະເມີດ ຄັ້ງທີສອງ;
3. 400,000,000 ກີບ ສຳລັບການລະເມີດ ຄັ້ງທີສາມ.

ຮ້ານຂາຍຍົກ-ຂາຍຍ່ອຍ ຫາກ ຈຳໜ່າຍ ແລະ ຂາຍ ຜະລິດຕະພັນຢາສູບ ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ ດັ່ງນີ້:

1. 500,000 ກີບ ສຳລັບການລະເມີດ ຄັ້ງທີໜຶ່ງ;
2. 1,000,000 ກີບ ສຳລັບການລະເມີດ ຄັ້ງທີສອງ;
3. 2,000,000 ກີບ ສຳລັບການລະເມີດ ຄັ້ງທີສາມ.

ມາດຕາ 20 (ໃໝ່) ການອາງຂາຍຜະລິດຕະພັນຢາສູບ ແບບເປີດເຜີຍ, ສະແດງ ຍີ່ຫໍ້ ຫຼື ລາຄາ ຂອງຜະລິດຕະພັນຢາສູບ

ບໍລິສັດຢາສູບ ແລະ ຜູ້ປະກອບການ ຫາກອາງຂາຍຜະລິດຕະພັນຢາສູບ ແບບເປີດເຜີຍ, ສະແດງ ຍີ່ຫໍ້ ຫຼື ລາຄາ ຂອງຜະລິດຕະພັນຢາສູບ ຈະຖືກປັບໃໝ ດັ່ງນີ້:

1. 3,000,000 ກີບ ສໍາລັບການລະເມີດ ຄັ້ງທີໜຶ່ງ;
2. 5,000,000 ກີບ ສໍາລັບການລະເມີດ ຄັ້ງທີສອງ;
3. 10,000,000 ກີບ ສໍາລັບການລະເມີດ ຄັ້ງທີສາມ.

ມາດຕາ 21 (ປັບປຸງ) ການ ຈໍາໜ່າຍ, ຂາຍ ຜະລິດຕະພັນຢາສູບ ໃນສະຖານທີ່ຫ້າມຂາຍຢາສູບ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຫາກ ຈໍາໜ່າຍ, ຂາຍ ຜະລິດຕະພັນຢາສູບ ໃນສະຖານທີ່ຫ້າມຂາຍຢາສູບ ຈະຖືກປັບໃໝ ດັ່ງນີ້:

1. 3,000,000 ກີບ ສໍາລັບການລະເມີດ ຄັ້ງທີໜຶ່ງ;
2. 5,000,000 ກີບ ສໍາລັບການລະເມີດ ຄັ້ງທີສອງ;
3. 10,000,000 ກີບ ສໍາລັບການລະເມີດ ຄັ້ງທີສາມ.

ສໍາລັບ ບຸກຄົນ ແລະ ການຈັດຕັ້ງ ຫາກລະເມີດເກີນສາມຄັ້ງຂຶ້ນໄປ ຈະຖືກປັບໃໝ ເທົ່າກັບອັດຕາການປັບໃໝໃນຄັ້ງທີສາມ ຕໍ່ຄັ້ງ.

ມາດຕາ 22 (ປັບປຸງ) ການສູບຢາໃນສະຖານທີ່ຫ້າມສູບຢາ

ບຸກຄົນໃດ ຫາກໄດ້ສູບຢາໃນສະຖານທີ່ຫ້າມສູບຢາ ຈະຖືກປັບໃໝ ດັ່ງນີ້:

1. 200,000 ກີບ ສໍາລັບການລະເມີດ ຄັ້ງທີໜຶ່ງ;
2. 500,000 ກີບ ສໍາລັບການລະເມີດ ຄັ້ງທີສອງ;
3. 1,000,000 ກີບ ສໍາລັບການລະເມີດ ຄັ້ງທີສາມຂຶ້ນໄປ.

ເຈົ້າຂອງ ຕຶກ, ອາຄານ, ສະຖານທີ່ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 33 ຂອງກົດໝາຍວ່າດ້ວຍການຄວບຄຸມຢາສູບ ຫາກບໍ່ ຈັດສັນໃຫ້ມີບ່ອນສູບຢາ ຫຼື ກໍານົດໃຫ້ເປັນສະຖານທີ່ຫ້າມສູບຢາ ຈະຖືກປັບໃໝ ດັ່ງນີ້:

1. 1,000,000 ກີບ ສໍາລັບການລະເມີດ ຄັ້ງທີໜຶ່ງ;
2. 5,000,000 ກີບ ສໍາລັບການລະເມີດ ຄັ້ງທີສອງ;
3. 10,000,000 ກີບ ສໍາລັບການລະເມີດ ຄັ້ງທີສາມ.

ເຈົ້າຂອງ ຕຶກ, ອາຄານ, ສະຖານທີ່ຫ້າມສູບຢາ ຫາກເມີນເສີຍ ປ່ອຍປະໃຫ້ມີການສູບຢາ ໃນສະຖານທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ຈະຖືກປັບໃໝ ດັ່ງນີ້:

1. 500,000 ກີບ ສໍາລັບການລະເມີດ ຄັ້ງທີໜຶ່ງ;
2. 1,000,000 ກີບ ສໍາລັບການລະເມີດ ຄັ້ງທີສອງ;
3. 2,000,000 ກີບ ສໍາລັບການລະເມີດ ຄັ້ງທີສາມ.

ມາດຕາ 23 (ປັບປຸງ) ການ ຂາຍຢາສູບໃຫ້ເດັກ ຫຼື ນໍາໃຊ້ເດັກ ທີ່ມີອາຍຸຕໍ່າກວ່າສິບແປດປີ ຊື້ ຫຼື ຂາຍ ຜະລິດຕະພັນຢາສູບ

ບໍລິສັດຢາສູບ ແລະ ຜູ້ປະກອບການ ຫາກຂາຍຢາສູບໃຫ້ເດັກ ທີ່ມີອາຍຸຕໍ່າກວ່າສິບແປດປີ ຈະຖືກປັບໃໝ ດັ່ງນີ້:

1. 4,000,000 ກີບ ສໍາລັບການລະເມີດ ຄັ້ງທີໜຶ່ງ;
2. 8,000,000 ກີບ ສໍາລັບການລະເມີດ ຄັ້ງທີສອງ;

3. 16,000,000 ກີບ ສໍາລັບການລະເມີດ ຄັ້ງທີສາມ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຫາກນໍາໃຊ້ເດັກ ທີ່ມີອາຍຸຕໍ່າກວ່າສິບແປດປີ ຊື້ ຫຼື ຂາຍຜະລິດຕະພັນຢາສູບ ຈະຖືກປັບໃໝ ດັ່ງນີ້:

1. 2,000,000 ກີບ ສໍາລັບການລະເມີດ ຄັ້ງທີໜຶ່ງ;
2. 4,000,000 ກີບ ສໍາລັບການລະເມີດ ຄັ້ງທີສອງ;
3. 8,000,000 ກີບ ສໍາລັບການລະເມີດ ຄັ້ງທີສາມ.

ສໍາລັບ ບຸກຄົນ ແລະ ການຈັດຕັ້ງ ຫາກລະເມີດເກີນສາມຄັ້ງຂຶ້ນໄປ ຈະຖືກປັບໃໝ ເທົ່າກັບອັດຕາການປັບໃໝໃນຄັ້ງທີສາມ ຕໍ່ຄັ້ງ.

**ມາດຕາ 24 (ໃໝ່) ການ ຊັກຊວນເດັກ ຫຼື ໃຫ້ເດັກ ທີ່ມີອາຍຸຕໍ່າກວ່າສິບແປດປີ ຊົມໃຊ້ຜະລິດຕະພັນຢາສູບ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຫາກຊັກຊວນເດັກ ຫຼື ໃຫ້ເດັກ ທີ່ມີອາຍຸຕໍ່າກວ່າສິບແປດປີ ຊົມໃຊ້ຜະລິດຕະພັນຢາສູບ ຈະຖືກປັບໃໝ ດັ່ງນີ້:

1. 2,000,000 ກີບ ສໍາລັບການລະເມີດຄັ້ງທີໜຶ່ງ;
2. 4,000,000 ກີບ ສໍາລັບການລະເມີດຄັ້ງທີສອງ;
3. 8,000,000 ກີບ ສໍາລັບການລະເມີດຄັ້ງທີສາມ.

ສໍາລັບ ບຸກຄົນ ແລະ ການຈັດຕັ້ງ ຫາກລະເມີດເກີນສາມຄັ້ງຂຶ້ນໄປ ຈະຖືກປັບໃໝ ເທົ່າກັບອັດຕາການປັບໃໝໃນຄັ້ງທີສາມ ຕໍ່ຄັ້ງ.

## ໝວດທີ 3
## ມາດຕະການອື່ນ
## ຕໍ່ຜູ້ລະເມີດ ກົດໝາຍ ແລະ ລະບຽບການ ກ່ຽວກັບການຄວບຄຸມຢາສູບ

**ມາດຕາ 25 (ໃໝ່) ມາດຕະການອື່ນ ຕໍ່ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດ ກົດໝາຍ ແລະ ລະບຽບການ ກ່ຽວກັບການຄວບຄຸມຢາສູບ ນອກຈາກຈະຖືກປັບໃໝແລ້ວ ຍັງຈະຖືກນໍາໃຊ້ມາດຕະການ ສຶກສາອົບຮົມ, ກ່າວເຕືອນ, ກັກ, ຍຶດ, ທໍາລາຍ ຜະລິດຕະພັນຢາສູບ ພ້ອມທັງໃຊ້ແທນຄ່າເສຍຫາຍ ທີ່ຕົນໄດ້ກໍ່ຂຶ້ນ.

**ມາດຕາ 26 (ໃໝ່) ມາດຕະການອື່ນ ຕໍ່ ບໍລິສັດຢາສູບ ແລະ ຜູ້ປະກອບການ ກ່ຽວກັບຢາສູບ**

ບໍລິສັດຢາສູບ ແລະ ຜູ້ປະກອບການ ກ່ຽວກັບຢາສູບ ທີ່ລະເມີດ ກົດໝາຍ ແລະ ລະບຽບການກ່ຽວກັບການຄວບຄຸມຢາສູບ ນອກຈາກຈະຖືກປັບໃໝແລ້ວ ຍັງຈະຖືກນໍາໃຊ້ມາດຕະການ ສຶກສາອົບຮົມ, ກ່າວເຕືອນ, ກັກ, ຍຶດ, ທໍາລາຍ ຜະລິດຕະພັນຢາສູບ ພ້ອມທັງໃຊ້ແທນຄ່າເສຍຫາຍ ທີ່ຕົນໄດ້ກໍ່ຂຶ້ນ.

ນອກຈາກຖືກນໍາໃຊ້ມາດຕະການ ຕາມທີ່ໄດ້ກໍານົດໄວ້ໃນວັກທີໜຶ່ງ ຂອງມາດຕານີ້ແລ້ວ ບໍລິສັດຢາສູບ ແລະ ຜູ້ປະກອບການ ກ່ຽວກັບຢາສູບ ຍັງຈະຖືກ ໂຈະ ການເຄື່ອນໄຫວດໍາເນີນທຸລະກິດ, ການອະນຸຍາດ ນໍາເຂົ້າ-ສົ່ງອອກ, ຈໍາໜ່າຍ ແລະ ຊື້ ຂາຍ ສໍາລັບການລະເມີດຄັ້ງທີສອງ.

ໃນກໍລະນີການລະເມີດຄັ້ງທີສາມ ບໍລິສັດຢາສູບ ແລະ ຜູ້ປະກອບການ ກ່ຽວກັບຢາສູບ ຈະຖືກຖອນໃບອະນຸຍາດດໍາເນີນທຸລະກິດ, ໃບອະນຸຍາດ ນໍາເຂົ້າ-ສົ່ງອອກ, ຈໍາໜ່າຍ ແລະ ຊື້ ຂາຍ ຕາມແຕ່ລະກໍລະນີ.

## ໝວດທີ 4
## ການຈັດຕັ້ງປະຕິບັດການ ປັບໃໝ ແລະ ນຳໃຊ້ມາດຕະການອື່ນ

**ມາດຕາ 27 (ປັບປຸງ) ອົງການຈັດຕັ້ງປະຕິບັດການ ປັບໃໝ ແລະ ນຳໃຊ້ມາດຕະການອື່ນ**

ກະຊວງສາທາລະນະສຸກ ເປັນເຈົ້າການ ໃນການຈັດຕັ້ງປະຕິບັດການ ປັບໃໝ ແລະ ນຳໃຊ້ມາດຕະການອື່ນ ຕໍ່ຜູ້ລະເມີດ ກົດໝາຍ ແລະ ລະບຽບການ ກ່ຽວກັບການຄວບຄຸມຢາສູບ ໂດຍປະສານສົມທົບ ຫຼື ໃຫ້ ກະຊວງປ້ອງກັນຄວາມສະຫງົບ, ກະຊວງອຸດສາຫະກຳ ແລະ ການຄ້າ ແລະ ກະຊວງການເງິນ ຈັດຕັ້ງປະຕິບັດການປັບໃໝ ແລະ ນຳໃຊ້ມາດຕະການອື່ນ ຕໍ່ຜູ້ລະເມີດ ກົດໝາຍ ແລະ ລະບຽບການ ກ່ຽວກັບການຄວບຄຸມຢາສູບ.

**ມາດຕາ 28 (ປັບປຸງ) ສິດ ແລະ ໜ້າທີ່ ຂອງກະຊວງສາທາລະນະສຸກ**

ກະຊວງສາທາລະນະສຸກ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຄົ້ນຄວ້າ ສ້າງລະບຽບການ ກ່ຽວກັບການ ປັບໃໝ ແລະ ນຳໃຊ້ມາດຕະການອື່ນ ຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບການຄວບຄຸມຢາສູບ;
2. ໂຄສະນາ, ເຜີຍແຜ່ກົດໝາຍ ແລະ ລະບຽບການກ່ຽວກັບການຄວບຄຸມຢາສູບ;
3. ກຳນົດແບບພິມການ ປັບໃໝ ແລະ ນຳໃຊ້ມາດຕະການອື່ນ ຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບການຄວບຄຸມຢາສູບ;
4. ປັບໃໝ ແລະ ນຳໃຊ້ມາດຕະການອື່ນ ຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບການຄວບຄຸມຢາສູບ;
5. ໂຈະການເຄື່ອນໄຫວທຸລະກິດ ຫຼື ຖອນ ໃບອະນຸຍາດດຳເນີນທຸລະກິດ ຂອງບໍລິສັດຢາສູບ ຫຼື ຜູ້ປະກອບການ ກ່ຽວກັບຜະລິດຕະພັນຢາສູບ;
6. ສະເໜີ ກະຊວງອຸດສາຫະກຳ ແລະ ການຄ້າ ໂຈະການອະນຸຍາດ ນຳເຂົ້າ-ສົ່ງອອກ, ຈຳໜ່າຍ ແລະ ຊື້ຂາຍ ຜະລິດຕະພັນຢາສູບ;
7. ກັກ, ຍຶດ ແລະ ທຳລາຍ ຜະລິດຕະພັນຢາສູບ ທີ່ລະເມີດ ກົດໝາຍ ແລະ ລະບຽບການ ກ່ຽວກັບການຄວບຄຸມຢາສູບ;
8. ປະສານສົມທົບກັບ ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດ ການ ປັບໃໝ ແລະ ນຳໃຊ້ມາດຕະການອື່ນ ຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບການຄວບຄຸມຢາສູບ;
9. ສັງລວມ ແລະ ລາຍງານ ກ່ຽວກັບການ ປັບໃໝ ແລະ ນຳໃຊ້ມາດຕະການອື່ນ ຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບການຄວບຄຸມຢາສູບ ໃຫ້ລັດຖະບານ ຢ່າງເປັນປົກກະຕິ;
10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 29 (ປັບປຸງ) ສິດ ແລະ ໜ້າທີ່ ຂອງກະຊວງການປ້ອງກັນຄວາມສະຫງົບ**

ກະຊວງປ້ອງກັນຄວາມສະຫງົບ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຕິດຕາມ ກວດກາ, ປັບໃໝ ແລະ ນຳໃຊ້ມາດຕະການອື່ນ ຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບການຄວບຄຸມຢາສູບ;
2. ກັກ, ຍຶດ ແລະ ທຳລາຍຜະລິດຕະພັນຢາສູບ ທີ່ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບການຄວບຄຸມຢາສູບ;
3. ນຳໃຊ້ແບບພິມການ ປັບໃໝ ແລະ ນຳໃຊ້ມາດຕະການອື່ນ ຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບການຄວບຄຸມຢາສູບ ທີ່ກະຊວງສາທາລະນະສຸກກຳນົດ;

4. ປະສານສົມທົບກັບ ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ຂ້ອງ ໃນການຈັດຕັ້ງປະຕິບັດການ ປັບໃໝ ແລະ ນຳໃຊ້ມາດຕະການອື່ນ ຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບການຄວບຄຸມຢາສູບ;

5. ສະຫຼຸບ ແລະ ລາຍງານ ກ່ຽວກັບການ ປັບໃໝ ແລະ ນຳໃຊ້ມາດຕະການອື່ນ ຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບການຄວບຄຸມຢາສູບ ໃຫ້ກະຊວງສາທາລະນະສຸກ ຢ່າງເປັນປົກກະຕິ;

6. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 30 (ປັບປຸງ) ສິດ ແລະ ໜ້າທີ່ ຂອງກະຊວງອຸດສາຫະກຳ ແລະ ການຄ້າ**

ກະຊວງອຸດສາຫະກຳ ແລະ ການຄ້າ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຕິດຕາມ ກວດກາ, ປັບໃໝ ແລະ ນຳໃຊ້ມາດຕະການອື່ນ ຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບການຄວບຄຸມຢາສູບ;

2. ກັກ, ຍຶດ ແລະ ທຳລາຍ ຜະລິດຕະພັນຢາສູບ ທີ່ລະເມີດ ກົດໝາຍ ແລະ ລະບຽບການ ກ່ຽວກັບການ ຄວບຄຸມຢາສູບ;

3. ນຳໃຊ້ແບບພິມການ ປັບໃໝ ແລະ ນຳໃຊ້ມາດຕະການອື່ນ ຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບການຄວບຄຸມຢາສູບ ທີ່ກະຊວງສາທາລະນະສຸກກຳນົດ;

4. ໂຈະການອະນຸຍາດ ນຳເຂົ້າ-ສົ່ງອອກ, ຈຳໜ່າຍ ແລະ ຊື້ ຂາຍ ຜະລິດຕະພັນຢາສູບ;

5. ປະສານສົມທົບກັບ ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດການ ປັບໃໝ ແລະ ນຳໃຊ້ມາດຕະການອື່ນ ຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບການຄວບຄຸມຢາສູບ;

6. ສະຫຼຸບ ແລະ ລາຍງານ ກ່ຽວກັບການ ປັບໃໝ ແລະ ນຳໃຊ້ມາດຕະການອື່ນ ຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບການຄວບຄຸມຢາສູບ ໃຫ້ກະຊວງສາທາລະນະສຸກ ຢ່າງເປັນປົກກະຕິ;

7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 31 ສິດ ແລະ ໜ້າທີ່ຂອງກະຊວງການເງິນ**

ກະຊວງກະຊວງການເງິນ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຕິດຕາມ ກວດກາ, ປັບໃໝ ແລະ ນຳໃຊ້ມາດຕະການອື່ນ ຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບການຄວບຄຸມຢາສູບ;

2. ກັກ, ຍຶດ ແລະ ທຳລາຍ ຜະລິດຕະພັນຢາສູບ ທີ່ລະເມີດ ກົດໝາຍ ແລະ ລະບຽບການ ກ່ຽວກັບການ ຄວບຄຸມຢາສູບ;

3. ນຳໃຊ້ແບບພິມການ ປັບໃໝ ແລະ ນຳໃຊ້ມາດຕະການອື່ນ ຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບການຄວບຄຸມຢາສູບ ທີ່ກະຊວງສາທາລະນະສຸກກຳນົດ;

4. ປະສານສົມທົບກັບ ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ຂ້ອງ ໃນການຈັດຕັ້ງປະຕິບັດການ ປັບໃໝ ແລະ ນຳໃຊ້ມາດຕະການອື່ນ ຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບການຄວບຄຸມຢາສູບ;

5. ສະຫຼຸບ ແລະ ລາຍງານ ກ່ຽວກັບການ ປັບໃໝ ແລະ ນຳໃຊ້ມາດຕະການອື່ນ ຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບການຄວບຄຸມຢາສູບ ໃຫ້ກະຊວງສາທາລະນະສຸກ ຢ່າງເປັນປົກກະຕິ;

6. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ໝວດທີ 5
## ການຄຸ້ມຄອງ ຊັບ ທີ່ຖືກ ກັກ, ຍຶດ, ການຊຳລະ ແລະ ການນຳໃຊ້ ເງິນປັບໃໝ

**ມາດຕາ 32 (ໃໝ່) ການຄຸ້ມຄອງຊັບ ທີ່ຖືກ ກັກ, ຍຶດ**

ຂະແໜງການສາທາລະນະສຸກ, ຂະແໜງການປ້ອງກັນຄວາມສະຫງົບ, ຂະແໜງການອຸດສາຫະກຳ ແລະ ການຄ້າ ແລະ ຂະແໜງການ ການເງິນ ຕ້ອງຮັກສາ ແລະ ເກັບມ້ຽນ ຊັບ ທີ່ຖືກ ກັກ, ຍຶດ ໄວ້ເປັນຢ່າງດີ ແລະ ເຈົ້າຂອງຊັບດັ່ງກ່າວ ຕ້ອງຮັບຜິດຊອບຄ່າປົກປັກຮັກສາ.

ໃນໄລຍະທີ່ເກັບຮັກສາຊັບທີ່ຖືກ ກັກ, ຍຶດ ນັ້ນ ບໍ່ອະນຸຍາດໃຫ້ພະນັກງານ-ລັດຖະກອນ, ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ນຳໃຊ້ຊັບດັ່ງກ່າວ. ໃນກໍລະນີລະເມີດ ຈະຖືກລົງວິໄນ ແລະ ໃຫ້ຮັບຜິດຊອບຄ່າເສຍຫາຍ ທີ່ຕົນໄດ້ກໍ່ ເກີດຂຶ້ນ.

**ມາດຕາ 33 (ໃໝ່) ການຊຳລະເງິນ ຄ່າປັບໃໝ, ຄ່າປົກປັກຮັກສາ ແລະ ຄ່າສິ້ນເປືອງ ກ່ຽວກັບຊັບທີ່ຖືກຍຶດ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບການຄວບຄຸມ ຢາສູບ ຕ້ອງຊຳລະເງິນ ຄ່າປັບໃໝ, ຄ່າປົກປັກຮັກສາ ແລະ ຄ່າສິ້ນເປືອງ ກ່ຽວກັບຊັບທີ່ຖືກຍຶດ ເປັນຕົ້ນ ຄ່າຝາກ ສາງ, ຄ່າທຳລາຍ, ຄ່າຂົນສົ່ງ, ຍົກຍ້າຍ ຜ່ານລະບົບທະນາຄານທຸລະກິດ ແລະ ຈຸດບໍລິການ ທີ່ລັດໄດ້ກຳນົດ ພາຍໃນ 10 ວັນລັດຖະການ ນັບແຕ່ວັນທີ່ແຈ້ງການນຳໃຊ້ມາດຕະການເປັນຕົ້ນໄປ.

**ມາດຕາ 34 (ປັບປຸງ) ການນຳໃຊ້ເງິນທີ່ໄດ້ຈາກການປັບໃໝ**

ເງິນ ທີ່ໄດ້ຈາກການປັບໃໝຕາມດຳລັດສະບັບນີ້ ຫົກສິບສ່ວນຮ້ອຍ (60%) ມອບເຂົ້າງົບປະມານແຫ່ງ ລັດ, ສ່ວນເງິນທີ່ເຫຼືອ ສີ່ສິບສ່ວນຮ້ອຍ (40%) ມອບເຂົ້າກອງທຶນຄວບຄຸມຢາສູບ.

ສຳລັບລາຍລະອຽດ ກ່ຽວກັບການຄຸ້ມຄອງກອງທຶນຄວບຄຸມຢາສູບ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 35 (ປັບປຸງ) ເປົ້າໝາຍການນຳໃຊ້ເງິນທີ່ໄດ້ຈາກການປັບໃໝ**

ເງິນ ທີ່ໄດ້ຈາກການປັບໃໝ ໃຫ້ນຳໃຊ້ເຂົ້າໃນເປົ້າໝາຍ ດັ່ງນີ້:

1. ສ້າງລະບຽບການ ທີ່ກ່ຽວກັບວຽກງານຄວບຄຸມຢາສູບ;
2. ໂຄສະນາ ເຜີຍແຜ່ ກົດໝາຍ ແລະ ລະບຽບການ ທີ່ກ່ຽວກັບວຽກງານຄວບຄຸມຢາສູບ;
3. ຝຶກອົບຮົມ ແລະ ຍົກລະດັບ ໃຫ້ບຸກຄະລາກອນ ທີ່ພົວພັນກັບວຽກງານຄວບຄຸມຢາສູບ;
4. ຕິດຕາມ ກວດກາ ແລະ ຈັດຕັ້ງປະຕິບັດ ກ່ຽວກັບວຽກງານຄວບຄຸມຢາສູບ;
5. ເກັບມ້ຽນ, ປົກປັກຮັກສາ ຊັບທີ່ຖືກ ກັກ, ຍຶດ, ທຳລາຍ;
6. ຈັດຊື້ ວັດຖຸປະກອນ ແລະ ສິ່ງອຳນວຍຄວາມສະດວກ ກ່ຽວກັບວຽກງານຄວບຄຸມຢາສູບ;
7. ປະຕິບັດນະໂຍບາຍຕໍ່ຜູ້ມີຜົນງານ ໃນການປະກອບສ່ວນກ່ຽວກັບວຽກງານຄວບຄຸມຢາສູບ;
8. ວຽກງານອື່ນ ທີ່ກ່ຽວກັບການຄວບຄຸມຢາສູບ.

## ໝວດທີ 6
## ບົດບັນຍັດສຸດທ້າຍ

**ມາດຕາ 36 (ປັບປຸງ) ການຈັດຕັ້ງປະຕິບັດ**

ກະຊວງສາທາລະນະສຸກ ເປັນເຈົ້າການ ໃນການຈັດຕັ້ງປະຕິບັດດຳລັດສະບັບນີ້ ຢ່າງເຂັ້ມງວດ.

ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ປະຕິບັດ ຕາມດຳລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 37 (ປັບປຸງ) ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ 17 ມີນາ 2026 ເປັນຕົ້ນໄປ.

ດຳລັດສະບັບນີ້ ປ່ຽນແທນດຳລັດວ່າດ້ວຍການປັບໃໝ ແລະ ນຳໃຊ້ມາດຕະການອື່ນ ຕໍ່ການລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບການຄວບຄຸມຢາສູບ ສະບັບເລກທີ 52/ລບ, ລົງວັນທີ 21 ກຸມພາ 2019.

**ຕາງໜ້າລັດຖະບານ ແຫ່ງ ສປປ ລາວ**

**ນາຍົກລັດຖະມົນຕີ**

ສອນໄຊ ສີພັນດອນ